## ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 08 ເມສາ 2007 ( 04-08-2007 )**

## ອົງພຣະເຢຊູມີພຣະຊົນເພື່ອພວກເຮົາ:

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 20:1-16

**ພຣະຄັມພີແຫ່ງຄວາມຈິງ:** ເພາະວ່າອົງພຣະເຢຊູໄດ້ຄືນພຣະຊົນ. ຜູ້ທີ່ເຊື່ອຄວນບອກຜູ້ອື່ນວ່າ ອົງພຣະເຢຊູໄດ້ມີຊີວິດເພື່ອພວກເຮົາທຸກຄົນ ແລະພຣະອົງໄດ້ສະເດັດຂຶ້ນໄປຫາພຣະບິດາທີ່ເມືອງຟ້າສວັນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ວຍທ່ານໃຫ້ຄົ້ນພົບວ່າ ອົງພຣະເຢຊູໄດ້ເຮັດອັນໃດເພື່ອພວກເຮົາໂດຍ:

- ບອກວ່າ ອົງພຣະເຢຊູໄດ້ມີພຣະຊົນເພື່ອພວກເຮົາແລະ
- ສັນຍາວ່າຈະບອກຄົນອື່ນວ່າ ພຣະເຢຊູໄດ້ມີພຣະຊົນເພື່ອພວກເຮົາ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ບົດນຳ: ຊອກຫາ, ແຕ່ບໍ່ພົບ** (ໂຢຮັນ 20:1-2)

1. ວັນຕົ້ນສັປດານັ້ນເວລາເຊົ້າຍັງມືດຢູ່, ນາງມາຣີອາ ໄທມັກດາລາໄດ້ມາເຖິງອຸບໂມງ ແລະນາງໄດ້ເຫັນກ້ອນຫີນຖືກຍ້າຍອອກຈາປາກອຸບໂມງແລ້ວ. 2. ນາງຈຶ່ງແລ່ນໄປຫາຊີໂມນເປໂຕ ແລະສາວົກຜູ້ອື່ນທີ່ພຣະເຢຊູຊົງຮັກແພງນັ້ນ ແລ້ວເວົ້າກັບເຂົາວ່າ " ເຂົາໄດ້ເອົາສົບຂອງພຣະອາຈານອອກຈາກອຸບໂມງແລ້ວ ແລະພວກເຮົາບໍ່ຮູ້ຈັກວ່າເຂົາເອົາໄປໄວ້ທີ່ໃດ.

- ໃນເພງສັຣເສີນບົດທີ 159-173 ນັ້ນເປັນເພງຄຳຂວັນຂອງການຟື້ນພຣະຊົນ:

**ຄຳຖາມ:** ທຸກຄົນທີ່ຕື່ນຂຶ້ນມາໃນຕອນເຊົ້າຂອງວັນຟື້ນພຣະຊົນ ( Easter ) ມີຄວາມຮູ້ສຶກກັບສິ່ງໃໝ່ ໆ ມີຄວາມຫວັງ ແລະຊົມຊື່ນຍິນດີຢູ່ບໍ່? ເປັນເພາະເຫດໃດ?

**ແນະນຳ:** ໃຫ້ນັກຮຽນນຶກເຖິງທຸກສິ່ງທີ່ພຣະເຢຊູຊົງກະທຳນັ້ນບໍ່ແມ່ນທຳເພື່ອພຣະອົງເອງ, ທຸກຢ່າງທີ່ພຣະອົງກະທຳນັ້ນແມ່ນກະທຳເພື່ອພວກເຮົາ. ສິ່ງທີ່ປະເສີດເລີດລ້ຳຄືພຣະອົງຊົງພຣະຊົນຢູ່ເພື່ອພວກເຮົາ.

## 1. <u>ຊອກຫາ-ແຕ່ບໍ່ພົບເຫັນ:</u> ( ໂຢຮັນ 20:1-2 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ ໂຢຮັນ 20:1-2

2) **ຄຳຖາມ:** ນາງມາຣີອາໄດ້ໄປຫາຫຍັງ ແລະລາວໄດ້ເຫັນຫຍັງແດ່?

3) **ສົນທະນາ:** ວ່ານາງໄດ້ເຮັດຢ່າງໃດ ໃນເມື່ອນາງໄປເຫັນອຸບໂມງຫວ້າງເປົ່າແລ້ວ ແລະສາເຫດທີ່ນາງເຮັດນັ້ນເພື່ອຫຍັງ?

- ນາງມາຣີອາຊອກຫາ-ແຕ່ບໍ່ພົບເຫັນ. ເປັນຫຍັງນາງຈຶ່ງບໍ່ພົບສິ່ງທີ່ນາງຊອກຫານັ້ນ?

**ຄຳຖາມ:** ແມ່ນຫຽັງທີ່ຄົນທັງຫລາຍຊອກຫາໃນສມັຍນີ້? ເປັນຫຍັງເຂົາຈຶ່ງບໍ່ພົບສິ່ງທີ່ເຂົາຊອກສແວງຫານັ້ນ?

4) **ອະທິບາຍ:** ຄົນສ່ວນຫລາຍຊອກສແວງຫາສິ່ງຂອງມາໃຫ້ຕົນເອງ, ສິ່ງເຫລົ່ານັ້ນບໍ່ອາດສາມາດເຮັດໃຫ້ເຂົາພໍໃຈຈັກເທື່ອ ເໝືອນກັນວ່າເຂົາໄດ້ອູ້ມໄຂ່ເປົ່າລ້າ ໆ.

- ຄວາມພໍໃຈໃນຊີວິດອັນແທ້ຈິງນັ້ນ ແມ່ນການເລີ້ມຕົ້ນກັບອຸບໂມງຫວ້າງເປົ່າ ແລະດຳເນີນຊີວິດໃນຄວາມລອດພົ້ນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 20:1-2

1) ນາງມາຣີອາໄດ້ສະແດງການເຂົ້າເຝົ້າພຣະເຢຊູໃຫ້ພວກເຮົາເຫັນຢ່າງໃດ?

2) ໃຫ້ເຫດຜົນທີ່ກ້ອນຫີນຖືກຍົກອອກ ແລະສົບຂອງພຣະເຢຊູອອກໄປເປັນໄປໄດ້ຢ່າງໃດ?

3) ຄວາມຮູ້ສຶກຢ່າງອັດຕະໂນມັດຂອງນາງມາຣີອາ ໃນຂນະທີ່ນາງເຫັນວ່າກ້ອນຫີນໄດ້ຖືກຍົກອອກແລ້ວ?

4) ເປັນຫຍັງນາງຈຶ່ງວ່າມີຄົນຍົກອອກ ແທນທີ່ລາວຊິວ່າເປັນການອັສຈັນ? ພວກເຮົາເດຄິດຢ່າງໃດ?

5) ການຟື້ນພຣະຊົນຂອງພຣະເຢຊູໄດ້ປ່ຽນແປງຄວາມຄິດຂອງພວກເຮົາແນວໃດ? ເຣື່ອງການອັສຈັນເດ?

## 2. <u>ການເຊື່ອຟັງ-ແຕ່ຍັງບໍ່ມີການເຂົ້າໃຈ:</u> (ໂຢຮັນ 20:3-10)

1) ຂໍໃຫ້ອາສາສມັກອ່ານພຣະທັມ ໂຢຮັນ 20:3-10

2) ໝູນໃຈໃຫ້ນັກຮຽນບັນລະຍາຍໃນການທີ່ ທ່ານເປໂຕ ແລະທ່ານໂຢຮັນໄດ້ເຫັນໃນອຸບໂມງຫວ້າງເປົ່າແລ້ວ ເຂົາກໍເຊື່ອໝັ້ນວ່າພຣະເຢຊູຍັງມີຊີວິດຢູ່. ຖາມວ່າ: ເປັນດ້ວຍເຫດໃດເຂົາເຈົ້າຈຶ່ງເຊື່ອ?

3) **ຄຳຖາມ:** ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ເພງສັຣເສີນ 16:10, ໂຮຊີອາ 6:2, ມາຣະໂກ 9:31-32 ແລະໂຢຮັນ 2:19-22. ພວກອັຄສາວົກເຄີຍໄດ້ຍິນເຣື່ອງການຄືນພຣະຊົນຈາກພຣະຄັມພີເດີມ ແລະຈາກພຣະເຢຊູເອງແລ້ວ ທ່ານຄິດວ່າເປັນຫຍັງເຂົາເຈົ້າບໍ່ເຂົ້າໃຈ?

<u>**ອະທິບາຍ:**</u> ໃນພຣະທັມ ໂຢຮັນ 20:3-10 ບໍ່ຈຳເປັນຈະໃຫ້ເຂົ້າໃຈທຸກຂໍ້ ທຸກຄວາມຢ່າງລະອຽດ ແລ້ວຈຶ່ງເຊື່ອໃນການຄືນພຣະຊົນຂອງພຣະເຢຊູຄຣິດ. ແມ່ນຫຍັງທີ່ເຂົາເຈົ້າຢາກຮູ້ໃນການຄືນພຣະຊົນຂອງພຣະອົງ ແລະວ່າພຣະອົງເປັນພຣະຜູ້ຊ່ອຍໃຫ້ລອດພົ້ນ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 20:3-10

1. ການສັນນິຖານເບິ່ງຜ້າພັນພຣະສົບຢູ່ໃນອຸບໂມງແລ້ວ ທ່ານໄດ້ລາຍລະອຽດຢ່າງໃດແດ່?
2. ຖ້າພວກເຮົາມາປຽບທຽບເບິ່ງຜ້າພັນສົບໃນພຣະທັມໂຢຮັນ 11,43-44 ແລະ ບົດທີ 20:5-7 ແລ້ວ ມີຄວາມສຳຄັນແຕກຕ່າງກັນຢ່າງໃດ?
3. ທ່ານເປໂຕ ແລະໂຢຮັນມີຄວາມເຫັນແຕກຕ່າງກັນຢ່າງໃດ ແລະເຂົາເຈົ້າເຮັດແນວໃດ?
4. ພວກເຮົາເຫັນດ້ວຍກັບຄວາມເຊື່ອໂຢຮັນໄດ້ຢ່າງໃດທັ້ງ ໆ ທີ່ຍັງບໍ່ທັນເຂົ້າໃຈ?

**3. ໄດ້ເຫັນກັບຕາ-ແຕ່ຍັງຈື່ບໍ່ໄດ້:** ( ໂຢຮັນ 20:11-15 )

1) ຂໍໃຫ້ນັກຮຽນອາສາອ່ານ ໂຢຮັນ 20:11-15

2) ທ່ານຈະປຽບທຽບການຕອບສນອງຂອງນາງມາຣີອາໃສ່ ການຕອບສນອງຂອງເປໂຕ ແລະໂຢຮັນແນວໃດ?

3) **ອະທິບາຍ:** ເຮັດລາຍການຫລັກຖານຕ່າງ ໆ ຂອງການຄືນພຣະຊົນຂອງພຣະເຢຊູ ( ອຸບໂມງຫວ່າງເປົ່າ,ຜ້າພັນພຣະສົບພັບໄວ້ຮຽບຮ້ອຍໃນອຸບໂມງ, ຄຳໃຫ້ການຂອງທູດສວັນ ແລະພຣະສົບຫາຍໄປໂດຍພຣະອົງເອງ.

**ຄຳຖາມ:** 1. ເປັນຫຍັງນາງມາຣີອາຈຶ່ງຍັງບໍ່ເຊື່ອວ່າພຣະອົງຊົງຄືນພຣະຊົນ?

2. ແມ່ນຫຍັງທີ່ທຳໃຫ້ຈິດໃຈຂອງພວກເຮົາຫວຸ້ນວາຍ ແລະອອກຈາກໃນການຈົດຈຳພຣະເຢຊູ?

3. ເພື່ອພວກເຮົາຈະໄດ້ເຫັນແຈ້ງ ແລະຈື່ຈຳພຣະອົງໄດ້ໃນເມື່ອພຣະອົງມາຢືນຢູ່ຕໍ່ໜ້າພວກເຮົານັ້ນພວກເຮົາຄວນຈະເຮັດແນວໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 20:11-15

1. ທູດສວັນ ແລະພຣະເຢຊູໄດ້ຖາມນາງມາຣີອາວ່າແນວໃດ?
2. ເປັນຫຍັງທູດສວັນ ແລະພຣະເຢຊູຈຶ່ງຖາມທັ້ງ ໆ ຮູ້ຈັກຄຳທີ່ນາງຈະຕອບຢູ່ແລ້ວ?
3. ຄຳຖາມອັນໃດທີ່ນາງມາຣີອາຖາມຜິດ?
4. ນາງສົມຄວນຈະຖາມຢ່າງໃດ?
5. ຄຳຖາມແບບໃດທີ່ຖືກ ຫລືຜິດ? (ໃນເມື່ອພວກເຮົາຫາກພົບກັບສະພາບແບບນີ້ ຄຳຖາມທີ່ຖືກຕ້ອງຈະຊ່ອຍໃຫ້ພວກເຮົາຈື່ຜູ້ທີ່ໄດ້ມີຊີວິດຢູ່ເພື່ອພວກເຮົາ)

**4. ໄດ້ເຫັນກັບຕາ ແລະໄດ້ບອກຄົນອື່ນ:** ໂຢຮັນ 20:16-18

1. ຂໍໃຫ້ນັກຮຽນອາສາອ່ານພຣະທັມ ໂຢຮັນ 20:16-18
2. **ອະທິບາຍ:** ພຣະເຢຊູໄດ້ເອີ້ນຊື່ຂອງເຂົາເຈົ້າ ພຣະອົງໄດ້ນຳເອົາຄວາມເມດຕາ ຄວາມຊົມຊື່ນຍິນດີມາສູ່ເຂົາເຈົ້າອີກ.
3. ບໍ່ດົນພຣະເຢຊູກໍຈະຈາກໄປອີກ, ຊຶ່ງເຮັດໃຫ້ຈິດໃຈຂອງມາຣີອາຕິດພັນຢູ່ກັບພຣະອົງ, ແຕ່ພຣະເຢຊູບອກໃຫ້ມາຣີອານຳເອົາຂ່າວດີໄປບອກທຸກຄົນທີ່ເຊື່ອ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນ:** 1. ນາງມາຣີອາຈື່ພຣະເຢຊູໄດ້ຕອນໃດ?

2. ເປັນຫຍັງນາງມາຣີອາຈຶ່ງມີຄວາມສັດທາໃນພຣະເຢຊູ?
3. ທ່ານຄິດວ່າ ເປັນຫຍັງໂຢຮັນຈຶ່ງບໍ່ບອກອັຄສາວົກຕອບສນອງຕໍ່ການບອກຂ່າວຂອງມາຣີອາ?
4. ພວກເຮົາຈະບອກຄັນອື່ນບໍ່ ກ່ຽວກັບຂ່າວດີອັນນີ້ວ່າ ພຣະເຢຊູວາຍພຣະຊົນ ແລະຍັງມີຊີວິດຢູ່?

## ຈົດຈໍ່ຢູ່ໃນບົດຮຽນພຣະຄັມພີແຫ່ງຄວາມຈິງ:

- ພວກເຮົາສາມາດໃຊ້ອຸບໂມງຫວ່າງເປົ່າເປັນຈຸດເລີ້ມຕົ້ນປະກາດວ່າພຣະເຢຊູຊົງຄືນພຣະຊົນແລ້ວ.
- ພຣະເຮົາບໍ່ຈຳເປັນຈະຕ້ອງເຂົ້າໃຈ ແລະອະທິບາຍໝົດທຸກຂໍ້ຄວາມກໍໄດ້, ວ່າແຕ່ເຊື່ອໃນພຣະອົງຜູ້ຊົງພຣະຊົນຢູ່ກໍໄດ້.
- ໃຫ້ຜ່ອນຄາຍຄວາມຮູ້ສຶກຫວຸ້ນວາຍຈິດໃຈ ແລະໃຫ້ມາດຳເນີນຊີວິດໃນຄວາມເຊື່ອ, ໃຫ້ຄົນອື່ນໄດ້ເຫັນພຣະເຢຊູ.
- ອະທິຖານປິດການຮຽນ